ພະນັກງານທີ່ຖືພາ ແລະ ພໍ່ແມ່ມືໃໝ່

ການຖືພາໃນເວລາເຮັດວຽກ

ຖ້າຫາກທ່ານຖືພາ,
ທ່ານມີສິດທີ່ຈະຮ້ອງຂໍການອຳນວຍຄວາມສະດວກດັ່ງຕໍ່ໄປນີ້
ໂດຍບໍ່ຈຳເປັນຕ້ອງມີໃບ ຢັ້ງຢືນແພດ. ນາຍຈ້າງຂອງທ່ານຕ້ອງສະໜອງ:

- ການພັກໄປຫ້ອງນ້ຳ, ການພັກກິນອາຫານ ແລະ ດື່ມນ້ຳ ທີ່ດົນກວ່າເກົ່າ ຫຼື ຖີ່ກວ່າເກົ່າ;
- ບ່ອນນັ່ງ; ແລະ
- ການຈຳກັດການຍົກເຄື່ອງໜັກເກີນ 20 ປອນ.

ທ່ານມີສິດທີ່ຈະຮ້ອງຂໍການປ່ຽນແປງອື່ນໆໃນບ່ອນເຮັດວຽກ
ເມື່ອທ່ານໄດ້ຮັບຄຳແນະນຳຈາກຜູ້ໃຫ້ບໍລິການດ້ານສຸຂະພາບ
ຫຼື ຜູ້ຊ່ວຍເຫຼືອແມ່ໃນການເກີດລູກ.
ນາຍຈ້າງຂອງທ່ານບໍ່ສາມາດບັງຄັບໃຫ້ທ່ານປັບປ່ຽນເງື່ອນໄຂການເຮັດວຽກ
ເນື່ອງຈາກວ່າທ່ານຖືພາ.

ການລາພັກເນື່ອງຈາກການຖືພາ ແລະ ການລາພັກເພື່ອລ້ຽງດູລູກ

ໂຄງການການລາພັກແບບໄດ້ຮັບເງິນຄ່າຈ້າງຂອງລັດມິນນີໂຊຕາສະໜອງການລາພັກແບບໄດ້ຮັບເງິນຄ່າຈ້າງ ແລະ ການປົກປ້ອງວຽກເຮັດງານທຳ ສຳລັບພະນັກງານສ່ວນໃຫຍ່ ໃນລະຫວ່າງການຖືພາ, ຫຼັງການເກີດລູກ ຫຼື ເພື່ອສ້າງຄວາມຜູກພັນກັບລູກ.

ທ່ານອາດຈະສາມາດລາພັກແບບໄດ້ຮັບເງິນຄ່າຈ້າງ ສຳລັບ:

- ຄວາມຕ້ອງການດ້ານສຸຂະພາບທີ່ກ່ຽວຂ້ອງກັບການຖືພາ;
- ການເກີດລູກ ແລະ ການຟື້ນຟູສຸຂະພາບ;
- ເວລາໃນການສ້າງຄວາມຜູກພັນ ໃນຖານະພໍ່ແມ່ທີ່ໃຫ້ກຳເນີດລູກ ຫຼື ບໍ່ໄດ້ໃຫ້ກຳເນີດລູກ;
  ແລະ
- ການສ້າງຄວາມຜູກພັນ ຫຼັງຈາກການຮັບລ້ຽງລູກບຸນທຳ ຫຼື ການຮັບເດັກມາອຸປະຖຳ.

ຖ້າຫາກທ່ານມີຄຸນສົມບັດຄົບຖ້ວນ, ທ່ານສາມາດລາພັກໄດ້ສູງສຸດ 12 ອາທິດເພື່ອເບິ່ງແຍງຕົນເອງ ແລະ 12 ອາທິດເພື່ອສ້າງຄວາມຜູກພັນກັບລູກ, ໂດຍລວມທັງໝົດສູງສຸດ 20 ອາທິດ. ການລາພັກເພື່ອສ້າງຄວາມຜູກພັນ ຕ້ອງຖືກນຳໃຊ້ພາຍໃນ 12 ເດືອນ ຫຼັງຈາກການເກີດ, ການຮັບລ້ຽງລູກບຸນທຳ ຫຼື ການຮັບເດັກມາອຸປະຖຳ. ໃນຂະນະທີ່ລາພັກແບບໄດ້ຮັບເງິນຄ່າຈ້າງ, ທ່ານຈະໄດ້ຮັບສ່ວນໜຶ່ງຂອງຄ່າຈ້າງ ປົກກະຕິຂອງທ່ານ ຈາກລັດ.

ການລາພັກແບບໄດ້ຮັບເງິນຄ່າຈ້າງ ອາດຈະທັບຊ້ອນກັບ
ການປົກປ້ອງຕາມກົດໝາຍວ່າດ້ວຍການລາພັກຄອບຄົວ ແລະ
ການລາພັກທາງການແພດ ຂອງລັດຖະບານກາງ (FMLA).
ຖ້າຫາກທ່ານບໍ່ມີຄຸນສົມບັດຄົບຖ້ວນສຳລັບ ການລາພັກແບບໄດ້ຮັບເງິນຄ່າຈ້າງ ຫຼື FMLA, ກົດໝາຍຂອງລັດມິນນີໂຊຕາ
ຍັງສະໜອງການລາພັກຂອງພໍ່ແມ່ແບບບໍ່ໄດ້ຮັບເງິນຄ່າຈ້າງ
ແຕ່ມີການປົກປ້ອງວຽກເຮັດງານທຳ ເປັນເວລາ 12 ອາທິດ. ການລາພັກນີ້
ຊຸ ມີໃຫ້ ໂດຍບໍ່ຄຳນຶງເຖິງສະຖານະການເຂົ້າເມືອງຂອງທ່ານ, ໄລຍະເວລາ
ທີ່ທ່ານໄດ້ເຮັດວຽກໃຫ້ກັບນາຍຈ້າງ ຫຼື ຂະໜາດຂອງນາຍຈ້າງຂອງທ່ານ .

ສຶກສາເພີ່ມເຕີມກ່ຽວກັບຄຸນສົມບັດ,
ວິທີການສະໝັກ ແລະ
ຂໍ້ກຳນົດຂອງນາຍຈ້າງ ໄດ້ທີ່
paidleave.mn.gov.



ການປ໊ຳ ນົມແມ່ໃນບ່ອນເຮັດວຽກ

ຖ້າຫາກທ່ານຕັດສິນໃຈປ໊ຳ
ນົມແມ່ໃນບ່ອນເຮັດວຽກ,
ນາຍຈ້າງຂອງທ່ານ,
ບໍ່ວ່າຈະເປັນອົງກອນຂະໜາດໃດກໍ່ຕາມ, ຕ້ອງສະໜອງ:

- ເວລາພັກເພື່ອປ໊ຳນົມ ໂດຍທີ່ທ່ານບໍ່ສູນເສຍ ຄ່າຕອບແທນ; ແລະ
- ພື້ນທີ່ທີ່ສະອາດ, ເປັນສ່ວນຕົວ ແລະ ປອດໄພ ເພື່ອປ໊ຳນົມ ຊຶ່ງ:
  - ບໍ່ແມ່ນ ຫ້ອງນ້ຳ;
  - ຖືກບັງຈາກ ສາຍຕາ;
  - ປາສະຈາກການລົບກວນຈາກເພື່ອນຮ່ວມງານ ແລະ ສາທາລະນະຊົນ;
  - ຢູ່ໃກ້ກັບພື້ນທີ່ເຮັດວຽກ; ແລະ
  - ມີບ່ອນສຽບໄຟຟ້າ.

ອາດຈະມີຂໍ້ຍົກເວັ້ນທີ່ຈຳກັດຕໍ່ຂໍ້ກຳນົດນີ້.

ທ່ານສາມາດເລືອກເວລາທີ່ຈະປ໊ຳນົມໄດ້
ໂດຍອີງຕາມຄວາມຕ້ອງການຂອງທ່ານ, ບໍ່ວ່າຈະເປັນການປ໊ຳ
ນົມໃນລະຫວ່າງການພັກທີ່ມີຢູ່ແລ້ວແບບໄດ້ຮັບເງິນຄ່າຈ້າງ,
ໃນລະຫວ່າງການພັກແບບບໍ່ໄດ້ຮັບເງິນຄ່າຈ້າງ ເຊັ່ນ: ພັກກິນເຂົ້າ ຫຼື
ໃນຊ່ວງເວລາອື່ນໆ.

ມັນເປັນການຜິດກົດໝາຍ ທີ່ນາຍຈ້າງຂອງທ່ານຈະໃຕ້ຕອບຄືນ,
ຫຼື ດຳເນີນການໃນທາງລົບຕໍ່ທ່ານ ສຳລັບການຮ້ອງຂໍ ຫຼື ການລາພັກ,
ການຂໍສິ່ງອຳນວຍຄວາມສະດວກໃນການຖືພາ ຫຼື ການພັກເພື່ອປ໊ຳ
ນົມໃນບ່ອນເຮັດວຽກ.

ຕິດຕໍ່ພວກເຮົາ

ພາກຕະຖານແຮງງານ (Labor Standards) ທີ່ເບີ 651-284-5075 ຫຼື
dli.laborstandards@state.mn.us.

DEPARTMENT OF LABOR AND INDUSTRY

Labor Standards • 443 Lafayette Road N. • St. Paul, MN 55155
651-284-5075 • dli.mn.gov • dli.laborstandards@state.mn.us

ໝາຍເຫດ: ນີ້ແມ່ນບົດສະຫຼຸບຫຍໍ້ຂອງກົດໝາຍລັດມິນນີໂຊຕາ. ມັນມີຈຸດປະສົງເພື່ອເປັນຄູ່ມືແນະນຳ ແລະ ບໍ່ໃຫ້ຖືວ່າເປັນສິ່ງທົດແທນ ຂໍ້ບັນຍັດກົດໝາຍຂອງລັດ ມິນນີໂຊຕາທີ່ກ່ຽວຂ້ອງ.

ສະບັບ 0126